ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1415 /ອຄ.ກອກ

ນະຄອນຫລວງວຽງຈັນ, ວັນທີ 28 AUG 2008

# ຂໍ້ຕົກລົງ

## ວ່າດ້ວຍ ຮູບແບບ ແລະ ຂະໜາດຜະລິດຕະພັນໄມ້

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 01-99/ສພຊ, ລົງວັນທີ 3/4/1999 ແລະ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດສະບັບເລກທີ 67/ນຍ, ລົງວັນທີ 12/4/2006.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17/8/2006.
- ອີງຕາມຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ສະບັບເລກທີ 0221/ອຄ, ລົງວັນທີ 13/2/2007 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງເລກທີ 1301/ອຄ, ລົງວັນທີ30/7/2007.

*ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:*

### ໝວດທີ I
### ຫລັກການທົ່ວໄປ

**<u>ມາດຕາ 1</u>: ຈຸດປະສົງ ແລະ ເປົ້າໝາຍ**

ຂໍ້ຕົກລົງສະບັບນີ້ມີຈຸດປະສົງເພື່ອກຳນົດນິຍາມ, ຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ທີ່ຜະລິດໂດຍໂຮງງານປຸງແຕ່ງໄມ້ ທີ່ໄດ້ມາດຕະຖານ ຊຶ່ງມີເປົ້າໝາຍ:

- ເພື່ອສ້າງຈິດສຳນຶກ ແລະ ຄວາມເຂົ້າໃຈກ່ຽວກັບຜະລິດຕະພັນໄມ້ ຢູ່ ສປປລາວ ໃຫ້ມີຄວາມເປັນເອກະ ພາບ ໃນຂອບເຂດທົ່ວປະເທດ;
- ເພື່ອຮັບໃຊ້ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ໃຫ້ໄດ້ມາດຕະຖານ ແລະ ທັນສະໄໝ.
- ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນໄມ້ ທີ່ຜ່ານຂະບວນການປຸງແຕ່ງຕາມຮູບແບບອຸດສາຫະກຳ ຫຼື ຫັດຖະກຳ, ແນໃສ່ເຮັດໃຫ້ການສົ່ງອອກນັບມື້ນັບສູງຂຶ້ນ;
- ເພື່ອຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມການນຳໃຊ້ໄມ້ທີ່ເປັນວັດຖຸດິບ ຈາກຊັບພະຍາກອນທຳມະຊາດທີ່ມີຢູ່ຢ່າງຈຳກັດໃຫ້ເກີດປະໂຫຍດສູງສຸດ ແລະ ເພື່ອເປັນການປົກປ້ອງສິ່ງແວດລ້ອມ ແລະ ຊີວະນາໆພັນໃຫ້ມີຄວາມໝັ້ນຄົງ ແລະ ຍືນນານ.

ມາດຕາ 2: ວ່າດ້ວຍຄຳນິຍາມ

**ຜະລິດຕະພັນໄມ້**: ແມ່ນຜະລິດຕະພັນທີ່ໄດ້ຮັບຈາກໂຮງງານອຸດສາຫະກຳປຸງແຕ່ງໄມ້, ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ແລະ ມາດຕາ 9 ຂອງກົດ ໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ; ກໍ່ຄືຂະບວນການຜະລິດສະເພາະຕາມທີ່ໄດ້ລະບຸຢູ່ໃນມາດຕາ 3 ຂອງຂໍ້ຕົກລົງສະບັບເລກທີ 0221/ອຄ, ລົງວັນທີ 13/2/2007.

ຜະລິດຕະພັນໄມ້ຈາກໂຮງງານປຸງແຕ່ງໄມ້ຂັ້ນໜຶ່ງ; ໂຮງງານປຸງແຕ່ງໄມ້ຂັ້ນສອງ ແລະ ໂຮງງານປຸງແຕ່ງໄມ້ຂັ້ນສາມ ໃນຂໍ້ຕົກລົງສະບັບນີ້ໄດ້ແບ່ງອອກເປັນສາມຮູບແບບຄື: **ຮູບແບບໄມ້ເລື່ອຍແປຮູບ; ຮູບແບບໄມ້ເຄິ່ງສຳເລັດຮູບ** ແລະ **ຮູບແບບສຳເລັດຮູບ** ຕາມລະດັບຂອງການສ້າງມູນຄ່າເພີ່ມໃນຂະບວນການຜະລິດຂອງໂຮງງານດັ່ງກ່າວ (ຕາມແຜນວາດໂຄງສ້າງອຸດສາຫະກຳປຸງແຕ່ງໄມ້), ຊຶ່ງລາຍລະອຽດມີຄື:

## 2.1 ຜະລິດຕະພັນໄມ້ໃນຮູບແບບໄມ້ເລື່ອຍແປຮູບ:

ແມ່ນຜະລິດຕະພັນໄມ້ທີ່ຜ່ານຂັ້ນຕອນ ແລະ ຂະບວນການຜະລິດຂອງການເລື່ອຍໂດຍໂຮງງານປຸງແຕ່ງໄມ້ຂັ້ນໜຶ່ງ ຫຼື ເອີ້ນວ່າໂຮງງານເລື່ອຍໄມ້ ຫຼືໂຮງເລື່ອຍ, ຊຶ່ງປະກອບດ້ວຍ:

2.1.1. ໄມ້ເລື່ອຍ (ເລກລະຫັດ 1610): ແມ່ນຜະລິດຕະພັນຈາກໂຮງງານເລື່ອຍໄມ້ ດັ່ງລາຍການຜະລິດຕະພັນ ທີ່ສະແດງຢູ່ໃນຕາຕະລາງທີ 1 ຕາມເອກະສານຊ້ອນທ້າຍ 1 ຊຶ່ງປະກອບດ້ວຍ:

1/. ໄມ້ຕີຕັບ: ແມ່ນໄມ້ເລື່ອຍຂະໜາດໃຫຍ່ທີ່ໄດ້ຈາກການເລື່ອຍໄມ້ທ່ອນໂດຍນຳໃຊ້ຈັກເລື່ອຍໄມ້ຂະໜາດໃຫຍ່ ແລະມີມູນຄ່າເພີ່ມຕ່ຳ. ລາຍການຜະລິດຕະພັນສະແດງຢູ່ໃນຂໍ້ 1 ຕາມຕາຕະລາງທີ 1.

2/. ໄມ້ແປຮູບ: ແມ່ນຜະລິດຕະພັນໄມ້ຈາກໂຮງງານເລື່ອຍໄມ້ ໂດຍນຳເອົາໄມ້ຕີຕັບມາເລື່ອຍທີ່ນຳໃຊ້ເຄື່ອງຈັກເລື່ອຍໄມ້ຂະໜາດກາງ ແລະ ມີມູນຄ່າເພີ່ມຕ່ຳ. ລາຍການຜະລິດຕະພັນສະແດງຢູ່ໃນຂໍ້2 ຕາມຕາຕະລາງທີ 1.

3/. ໄມ້ຊອຍ: ແມ່ນ ຜະລິດຕະພັນໄມ້ຈາກໂຮງງານເລື່ອຍໄມ້ ທີ່ໄດ້ຈາກການນຳເອົາໄມ້ເລື່ອຍ, ໄມ້ປີດມາຊອຍ, ຕັດຂະໜາດ, ປາດເປັນຮູບປະພັນຕ່າງໆຕາມຮູບແບບຂອງຊິ້ນສ່ວນໂຕະ, ຕັ່ງ, ຕູ້, ຕຽງ ຫຼື ຮູບແບບອື່ນໆ ທີ່ມີລັກສະນະຫຍາບໆ ຄືກັບໄມ້ແປຮູບທົ່ວໄປ. ລາຍການຜະລິດຕະພັນໄດ້ສະແດງໃນຂໍ້ 3 ຕາມຕາຕະລາງທີ 1.

## 2.2 ຜະລິດຕະພັນໄມ້ໃນຮູບແບບໄມ້ເຄິ່ງສຳເລັດຮູບ:

ແມ່ນຜະລິດຕະພັນຈາກຂະບວນການຜະລິດຂອງໂຮງງານປຸງແຕ່ງໄມ້ຂັ້ນສອງ (ໂຮງງານປຸງແຕ່ງແຜ່ນໄມ້, ໄມ້ປອກ ແລະ ໄມ້ອັດຕ່າງໆ, ໂຮງງານປຸງແຕ່ງໄມ້ສຳລັບການກໍ່ສ້າງ ແລະ ໂຮງງານຜະລິດເຍື່ອ (ເຈັ້ຍ) ຊຶ່ງລາຍລະອຽດມີດັ່ງຕໍ່ໄປນີ້:

2.2.1. ໄມ້ປອກ, ໄມ້ຝານ: (ເລກລະຫັດ 1621): ແມ່ນຜະລິດຕະພັນຈາກໂຮງງານຜະລິດ ແຜ່ນໄມ້, ໄມ້ປອກ ແລະ ໄມ້ອັດຕ່າງໆ ຊຶ່ງນຳໃຊ້ວັດຖຸດິບຈາກໄມ້ທ່ອນ. ຜະລິດຕະພັນໄມ້ດັ່ງກ່າວນີ້ມີມູນຄ່າເພີ່ມຕ່ຳຫາປານກາງ ທີ່ສາມາດສະໜອງໃຫ້ໂຮງງານປຸງແຕ່ງໄມ້ຂັ້ນສອງ ແລະ ຂັ້ນສາມ. ລາຍການຜະລິດຕະພັນນີ້ສະແດງຢູ່ໃນຂໍ້ 1 ແລະ ຂໍ້ 2 ໃນຕາຕະລາງທີ 2 ຕາມເອກະສານຊ້ອນທ້າຍ 2.

2.2.2. ຜະລິດຕະພັນໄມ້ສຳລັບການກໍ່ສ້າງ ຫຼື ໄມ້ເຄື່ອງເຮືອນ (ເລກລະຫັດ 1622.1): ແມ່ນຜະລິດຕະພັນໄມ້ຈາກໂຮງງານປຸງແຕ່ງໄມ້ຂັ້ນສອງ ໂດຍນຳເອົາໄມ້ແປຮູບ ຫຼື ໄມ້ຊອຍມາຜະລິດເປັນຊິ້ນສ່ວນສຳລັບການກໍ່ສ້າງ ທີ່ຜ່ານຂະບວນການຜະລິດຫລາຍຂັ້ນຕອນ ແລະ ປະກອບມີຂະໜາດທີ່ແນ່ນອນ, ມີການອົບ, ການບາກ, ການເຈາະ, ການປາດຂຶ້ນຮູບ, ການຂັດ, ການແກະສະຫຼັກລວດລາຍ ແລະ ອື່ນໆ ຕາມການອອກແບບຂອງວິສະວະກອນທີ່ກ່ຽວຂ້ອງເພື່ອສະໜອງຕາມຈຸດປະສົງ ແລະ ເປົ້າໝາຍການນຳໃຊ້. ຜະລິດຕະພັນໄມ້ດັ່ງກ່າວເປັນຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ດັ່ງທີ່ໄດ້ລະບຸຢູ່ໃນຕາຕະລາງທີ 2 ຕາມເອກະສານຊ້ອນທ້າຍ 2.

ກໍລະນີນຳເອົາໄມ້ເຄື່ອງເຮືອນທີ່ຜ່ານຂະບວນການຜະລິດດັ່ງທີ່ໄດ້ລະບຸໃນວັກເທິງ ສືບຕໍ່ຜະລິດເປັນຊິ້ນສ່ວນສຳເລັດຮູບທີ່ສາມາດແກະແຍກ ແລະ ປະກອບເຂົ້າກັນໄດ້ທັນທີ (Knock-down) ຕາມການອອກແບບເປັນໜຶ່ງຊຸດ/ຫຼັງ ຫຼື ຕຶກອາຄານ ຈຶ່ງຖືໄດ້ວ່າເປັນຜະລິດຕະພັນໄມ້ເຄື່ອງເຮືອນສຳເລັດຮູບ ທັງນີ້ກໍເພື່ອໃຫ້ມີການສ້າງມູນຄ່າເພີ່ມສູງ ແລະ ສະດວກໃນການຫຸ້ມຫໍ່, ການບັນຈຸ ແລະ ການເຄື່ອນຍ້າຍ.

## 2.3 . ຜະລິດຕະພັນໄມ້ໃນຮູບແບບສຳເລັດຮູບ:

ແມ່ນຜະລິດຕະພັນໄມ້ ທີ່ໄດ້ຮັບຈາກການປຸງແຕ່ງຂອງໂຮງງານປຸງແຕ່ງໄມ້ຂັ້ນສອງ (ໂຮງງານປຸງແຕ່ງໄມ້ອັດຕ່າງໆ, ໂຮງງານປຸງ ແຕ່ງເຄື່ອງປະກອບໃນອາຄານ, ໂຮງງານປຸງແຕ່ງໄມ້ປູພື້ນ ແລະ ໄມ້ປັກເກ; ລວມທັງໂຮງງານຜະລິດເຈັ້ຍ, ເຄື່ອງຫຸ້ມຫໍ່ດ້ວຍເຈັ້ຍ ແລະ ເຈັ້ຍແຂງ) ແລະ ໂຮງງານປຸງແຕ່ງໄມ້ຂັ້ນສາມ (ໂຮງງານປຸງແຕ່ງພາຊະນະບັນຈຸດ້ວຍໄມ້, ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້, ໂຮງງານເຟີນິເຈີໄມ້) ທີ່ມີມູນຄ່າເພີ່ມປານກາງຫາສູງ ແລະ ສາມາດຊົມໃຊ້ໄດ້ ເລີຍ ຊຶ່ງປະກອບດ້ວຍ:

2.3.1. ໄມ້ອັດ: (ເລກລະຫັດ 1621): ແມ່ນຜະລິດຕະພັນຈາກໂຮງງານຜະລິດໄມ້ອັດຕ່າງໆ ຊຶ່ງນຳໃຊ້ວັດຖຸດິບຈາກໄມ້ທ່ອນ, ໄມ້ປອກ, ໄມ້ຝານ ຫຼື ໄມ້ເສດຕ່າງໆ. ຜະລິດຕະພັນດັ່ງກ່າວປະກອບດ້ວຍໄມ້ອັດທົ່ວໄປທີ່ສະໜອງໃຫ້ໂຮງງານປຸງແຕ່ງໄມ້ຂັ້ນສາມ ຫຼື ການກໍ່ສ້າງທົ່ວໄປ ແລະ ໄມ້ອັດກັນນ້ຳ ຊຶ່ງມີມູນຄ່າເພີ່ມຕ່ຳ ຫາ ປານກາງ. ລາຍການຜະລິດຕະພັນນີ້ສະແດງຢູ່ໃນຂໍ້ 3, ຂໍ້ 4 ແລະ ຂໍ້ 5 ໃນຕາຕະລາງທີ 2 ຕາມເອກະສານຊ້ອນທ້າຍ 2.

2.3.2. ເຄື່ອງປະກອບໃນອາຄານ ( ເລກລະຫັດ 1622.2): ແມ່ນຜະລິດຕະພັນໄມ້ທີ່ເປັນສ່ວນປະກອບໃນອາຄານຕ່າງໆ, ເປັນຊິ້ນສ່ວນທີ່ສາມາດປະກອບເຂົ້າກັນໄດ້, ເປັນຜະລິດຕະພັນທີ່ຜ່ານຫລາຍຂັ້ນຕອນການຜະລິດ ແລະ ສາມາດສະໜອງໃຫ້ໂຮງງານປຸງແຕ່ງໄມ້ຂັ້ນສາມ ຫຼື ອຸດສາຫະກຳກໍ່ສ້າງ ແລະ ມີມູນຄ່າເພີ່ມປານກາງຫາສູງ. ລາຍການຜະລິດຕະພັນນີ້ສະແດງຢູ່ໃນຕາຕະລາງທີ 2 ຕາມເອກະສານຊ້ອນທ້າຍ 2.

2.3.3. ໄມ້ປູພື້ນ ແລະ ໄມ້ປັກເກ (ເລກລະຫັດ 1624): ແມ່ນຜະລິດຕະພັນໄມ້ປູພື້ນທຸກຊະນິດ ທີ່ໄດ້ຈາກການນຳເອົາໄມ້ເລື່ອຍ, ໄມ້ຊອຍ ມາຜ່ານຫລາຍຂະບວນການຜະລິດເຊັ່ນ: ການອົບ, ການກົບ, ແລ່ນຮ່ອງ, ແລ່ນລີ້ນ ແລະ ອື່ນໆ. ຜະລິດຕະພທນດັ່ງກ່າວນີ້ມີມູນຄ່າເພີ່ມປານກາງ ຊຶ່ງສາມາດສະໜອງໃຫ້ໂຮງງານປຸງແຕ່ງໄມ້ຂັ້ນສາມ ຫຼື ຮັບໃຊ້ການກໍ່ສ້າງ ຫຼື ອຸດສາຫະກຳອື່ນໆໄດ້, ໃນນີ້ລວມມີຊະນິດໄມ້ປູພື້ນທົ່ວໄປ, ໄມ້ປູພື້ນພາຍໃນ, ໄມ້ປູພື້ນພາຍນອກ, ໄມ້ປູທາງຍ່າງ, ໄມ້ປູສະຖານທີ່ສາທາລະນະ, ໄມ້ປະກອບຖັງລົດບັນທຸກ, ໄມ້ປັກເກປູພື້ນ ແລະ ອື່ນໆ. ລາຍການຜະລິດຕະພັນນີ້ສະແດງຢູ່ໃນຕາຕະລາງທີ 2 ຕາມເອກະສານຊ້ອນທ້າຍ 2.

2.3.4 <u>ພາຊະນະບັນຈຸທີ່ເຮັດດ້ວຍໄມ້</u> (ເລກລະຫັດ 1623): ແມ່ນຜະລິດຕະພັນພາຊະນະບັນຈຸທີ່ເຮັດ ດ້ວຍໄມ້ສຳເລັດຮູບ ຊຶ່ງຜ່ານຂະບວນການຜະລິດແບບອຸດສາຫະກຳ ຫຼື ຫັດຖະກຳ ຈົນເປັນຜະລິດຕະພັນສຳເລັດຮູບ ທີ່ສາມາດຊົມໃຊ້ໄດ້ເລີຍ. ລາຍການຜະລິດຕະພັນນີ້ສະແດງຢູ່ໃນຕາຕະລາງທີ 3 ຕາມເອກະສານຊ້ອນທ້າຍ 3.

2.3.5 <u>ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້</u> (ເລກລະຫັດ 1629): ແມ່ນຜະລິດຕະພັນເຄື່ອງໃຊ້ສອຍທີ່ເຮັດ ດ້ວຍໄມ້ສຳເລັດຮູບ ຊຶ່ງຜ່ານຂະບວນການຜະລິດແບບອຸດສາຫະກຳ ຫຼື ຫັດຖະກຳ ໂດຍທີ່ ການຜະລິດມີຄວາມປານີດ, ຈົບງາມ, ເປັນຜະລິດຕະພັນສຳເລັດຮູບທີ່ສາມາດຊົມໃຊ້ໄດ້ເລີຍ. ລາຍການຜະລິດຕະພັນນີ້ສະແດງຢູ່ໃນຕາຕະລາງທີ 3 ຕາມເອກະສານຊ້ອນທ້າຍ 3.

2.3.6 <u>ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້</u> (ເລກລະຫັດ 3100): ແມ່ນຜະລິດຕະພັນໄມ້ທີ່ໄດ້ຮັບຈາກຂະບວນການຜະລິດຂອງໂຮງງານປຸງແຕ່ງໄມ້ຂັ້ນສາມ ຫຼື ໂຮງງານເຟີນີເຈີ ຊຶ່ງມີຄວາມລະອຽດ ແລະ ປານີດ. ຜະລິດຕະພັນໄມ້ດັ່ງກ່າວ ຕ້ອງເປັນຜະລິດຕະພັນທີ່ປະກອບເຂົ້າກັນແລ້ວ ຫຼື ຍັງບໍ່ທັນປະກອບ (Knock-down), ແຕ່ຕ້ອງມີຊິ້ນສ່ວນສຳເລັດຮູບຄົບຊຸດ ໂດຍສາມາດປະກອບເຂົ້າກັນໄດ້ທັນທີ ແລະ ສາມາດຊົມໃຊ້ໄດ້ເລີຍ. ລາຍການຜະລິດຕະພັນນີ້ສະແດງຢູ່ໃນຕາຕະລາງທີ 3 ຕາມເອກະສານຊ້ອນທ້າຍ 3.

2.3.7 <u>ຜະລິດຕະພັນຈາກຕໍ່ໄມ້</u>: ແມ່ນຜະລິດຕະພັນເຄື່ອງໃຊ້ສອຍຕາມເລກລະຫັດ 1629 ແລະ ເຄື່ອງເຟີນີເຈີ ຕາມເລກລະຫັດ 3100 ຊຶ່ງນຳໃຊ້ຕໍ່ໄມ້ເປັນວັດຖຸດິບຕົ້ນຕໍ ໂດຍຜ່ານຂະບວນການຜະລິດແບບຫັດຖະກຳ ຫຼື ອຸດສາຫະກຳ ເຊັ່ນ: ການຕັດ, ການຊອຍ ຫຼື ການປາດ, ການຄວັດ, ການແກະສະຫຼັກລວດລາຍ, ການເຈາະ ແລະ ອື່ນໆ ຈາກຕໍ່ໄມ້. ຜະລິດຕະພັນດັ່ງກ່າວ ແມ່ນມີລັກ ສະນະຮູບຮ່າງທີ່ມີຄວາມປານີດ, ຮູບຊົງສວຍງາມ, ເດັ່ນຊັດ ແລະ ເປັນຜະລິດຕະພັນທີ່ມີມູນຄ່າເພີ່ມສູງອີກດ້ວຍ.

## ໝວດທີ II

## <u>ຮູບແບບ ແລະ ຂະໜາດຜະລິດຕະພັນໄມ້</u>

<u>ມາດຕາ 3</u>: ຮູບແບບ ແລະ ຂະໜາດຜະລິດຕະພັນໄມ້

ຮູບແບບຂອງແຕ່ລະຜະລິດຕະພັນໄມ້ຕາມທີ່ໄດ້ນິຍາມຢູ່ໃນມາດຕາ 2 ແມ່ນໄດ້ສະແດງໃນຖັນສຸດທ້າຍຂອງບັນດາຕາຕະລາງທີ 1, ທີ 2 ແລະ ທີ 3 ໃນເອກະສານຊ້ອນທ້າຍ 1; 2 ແລະ 3.

ຂະໜາດຂອງແຕ່ລະລາຍການຜະລິດຕະພັນໄມ້ ໄດ້ກຳນົດຢູ່ໃນຕາຕະລາງທີ 1 (ຜະລິດຕະພັນຈາກໂຮງງານເລື່ອຍໄມ້); ຢູ່ຕາຕະລາງທີ 2 (ຜະລິດຕະພັນຈາກໂຮງງານປຸງແຕ່ງແຜ່ນໄມ້, ໄມ້ປອກ ແລະ ໄມ້ອັດຕ່າງໆ, ໂຮງງານປຸງແຕ່ງໄມ້ສຳລັບການກໍ່ສ້າງ ແລະ ເຄື່ອງປະກອບໃນອາຄານ, ໂຮງງານປຸງແຕ່ງໄມ້ປູພື້ນ ແລະ ໄມ້ປັກເກ, ໂຮງງານຜະລິດເຈ້ຍ, ເຄື່ອງຫຸ້ມຫໍ່ດ້ວຍເຈ້ຍ ແລະ ເຈ້ຍແຂງ), ຢູ່ໃນຕາຕະລາງ ທີ 3 (ໂຮງງານປຸງແຕ່ງພາຊະນະບັນຈຸດ້ວຍໄມ້, ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້ ແລະ ໂຮງ ງານເຟີນີເຈີດ້ວຍໄມ້).

ມາດຕາ 4: ຮູບແບບຜະລິດຕະພັນໄມ້ອື່ນໆ ແລະ ຂະໜາດຜະລິດຕະພັນທີ່ແຕກຕ່າງຈາກການກໍານົດ

4.1. ລາຍການຜະລິດຕະພັນໄມ້ອື່ນໆທີ່ມີຮູບແບບ ແລະ ຂະໜາດທີ່ແຕກຕ່າງຈາກທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ໂຮງງານຕ້ອງສະເໜີມາຍັງຂະແໜງອຸດສາຫະກໍາ ແລະ ການຄ້າ ພິຈາລະນາຄົ້ນຄ້ວາເພີ່ມເຕີມເປັນແຕ່ລະກໍລະນີ.

4.2. ສໍາລັບຜະລິດຕະພັນຫວາຍ ແລະ ໄມ້ປ່ອງ, ຜະລິດຕະພັນຈາກໂຮງງານປຸງແຕ່ງເຄື່ອງປ່າຂອງດົງ ແລະ ຜະລິດຕະພັນຈາກໂຮງງານຜະລິດຢາພື້ນເມືອງ, ສະກັດນໍ້າຫອມ, ນໍ້າມັນ ແລະ ອື່ນໆຈະໄດ້ກໍານົດຕ່າງຫາກ.

ມາດຕາ 5: ການຈົດທະບຽນຄຸນນະພາບ ແລະ ມາດຕະຖານຜະລິດຕະພັນໄມ້

ຜູ້ດໍາເນີນກິດຈະການໂຮງງານອຸດສາຫະກໍາປຸງແຕ່ງໄມ້ ສາມາດນໍາເອົາຜະລິດຕະພັນໄມ້ຂອງຕົນເອງໄປຈົດທະບຽນຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ນໍາອົງການມະຫາພາກຕາມທີ່ໄດ້ລະບຸຢູ່ໃນມາດຕາ 15 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ໂດຍຜ່ານການສ້າງມາດຕະຖານຜະລິດຕະພັນໄມ້ຂອງຕົນຕາມທີ່ໄດ້ກໍານົດຢູ່ໃນມາດຕາ 9 ແລະ ມາດຕາ 10 ຂອງດໍາລັດສະບັບເລກ ທີ 85/ນຍ, ລົງວັນທີ 2/11/1995 ວ່າດ້ວຍການຄຸ້ມຄອງ ມາດຕະຖານ ແລະ ຄຸນນະພາບຜະລິດຕະພັນສິນຄ້າ.

ສໍາລັບມາດຕະຖານຂອງແຕ່ລະຜະລິດຕະພັນໄມ້ ທີ່ລະບຸຢູ່ໃນຕາຕະລາງທີ 1; ທີ 2 ແລະ ທີ 3 ນັ້ນ ແມ່ນຈະໄດ້ສ້າງເປັນເອກະສານທາງດ້ານເຕັກນິກ ເພື່ອໃຫ້ກາຍເປັນມາດຕະຖານແຫ່ງຊາດ ຊຶ່ງຈະໄດ້ກໍານົດສ້າງ ຫຼື ພັດທະນາຂຶ້ນຕາມແຕ່ລະກໍລະນີທີ່ເຫັນວ່າມີຄວາມຈໍາເປັນ ຫຼື ຕາມການສະເໜີຂອງທຸລະກິດຕາມລະບຽບການກ່ຽວກັບມາດຕະຖານ ແລະ ຄຸນນະພາບຂອງຜະລິດຕະພັນ ແລະ ສິນຄ້າລາວ.

ສໍາລັບຫົວໜ່ວຍວັດແທກແມ່ນຕ້ອງປະຕິບັດຕາມຫົວໜ່ວຍວັດແທກທີ່ ສປປລາວ ໄດ້ປະກາດໃຊ້ແລ້ວ.

ມາດຕາ 6: ແຜນການເຄື່ອນໄຫວການຜະລິດຂອງໂຮງງານ

ໃນແຜນການຜະລິດຂອງ ໂຮງງານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 5 (ຂໍ້ 9) ຂອງຂໍ້ຕົກລົງສະບັບເລກທີ 1301/ອຄ, ລົງວັນທີ 30/7/2007, ໃຫ້ປະຕິບັດດັ່ງນີ້:

6.1. ໂຮງງານປຸງແຕ່ງໄມ້ ຕ້ອງປະຕິບັດຄື:

- 6.1.1. ຂຶ້ນແຜນການຜະລິດ (ອ1) ໂດຍອີງຕາມກໍາລັງການຜະລິດຕົວຈິງຂອງໂຮງງານເພື່ອເປັນບ່ອນອີງໃຫ້ແກ່ການໄດ້ຮັບການສະໜອງໂຄຕາໄມ້;
- 6.1.2. ຂຶ້ນແຜນການຈໍາໜ່າຍຜະລິດຕະພັນໄມ້ (ອ2);
- 6.1.3. ຂຶ້ນແຜນການຄວາມຕ້ອງການວັດຖຸດິບປະຈໍາປີ (ອ3);
- 6.1.4. ຄິດໄລ່ລາຄາສໍາເລັດຮູບຕໍ່ຫົວໜ່ວຍຜະລິດຕະພັນ (ອ4);
- 6.1.5. ສະຫຼຸບການຈັດຕັ້ງປະຕິບັດຕົວຈິງ (ອ6) ເປັນງວດ ຫຼື ຕາມແຕ່ລະກໍລະນີຂອງຄວາມຕ້ອງການ ແລະ ຄວາມຈໍາເປັນຂອງແຕ່ລະໄລຍະ.

ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ຕ້ອງນໍາໃຊ້ໂຕເລກໃນແຜນການດັ່ງກ່າວ (ອ1, ອ2, ອ3, ອ4) ເພື່ອສົ່ງຕໍ່ໃຫ້ແກ່ສະມາຄົມອຸດສາຫະກໍາປຸງແຕ່ງໄມ້ ແລະ ພະແນກ

ອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສຳລັບການພິຈາລະນາ, ຕິດຕາມ ແລະ ຄຸ້ມຄອງຮ່ວມກັນ.

6.2. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີໜ້າທີ່ ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດແຜນຕ່າງໆຂ້າງເທິງ ແລະ ລາຍງານກະຊວງອຸດສາຫະກຳ ແລະ ການຄ້າ ເປັນງວດ ຫຼື ຕາມແຕ່ລະກໍລະນີ.

**ມາດຕາ 7:** ມູນຄ່າເພີ່ມຂອງຜະລິດຕະພັນໄມ້.

ຜະລິດຕະພັນໄມ້ຕ້ອງໄດ້ຜ່ານຂະບວນການຜະລິດ ແລະ ສ້າງມູນຄ່າເພີ່ມທີ່ແຕກຕ່າງກັນໂດຍອີງຕາມຮູບແບບ, ປະເພດ, ຊະນິດ ແລະ ລັກສະນະສະເພາະຂອງແຕ່ລະຜະລິດຕະພັນຕາມແຕ່ລະກໍລະນີ ຊຶ່ງຜູ້ຜະລິດຕ້ອງກຳນົດຂະບວນການຜະລິດດັ່ງກ່າວຢ່າງຈະແຈ້ງຕາມແຕ່ລະລາຍການຜະລິດຕະພັນໄມ້ ທີ່ກຳນົດໃນຕາຕະລາງ 1, 2 ແລະ 3.

ສຳລັບການຄິດໄລ່ມູນຄ່າເພີ່ມຂອງແຕ່ລະຜະລິດຕະພັນໄມ້ຈະໄດ້ອອກບົດແນະນຳເພີ່ມເຕີມຕ່າງຫາກ.

ລັດຖະບານຊຸກຍູ້ ແລະ ສົ່ງເສີມໃຫ້ນຳເອົາຜະລິດຕະພັນໄມ້ສຳເລັດຮູບທີ່ມີມູນຄ່າເພີ່ມສູງເພື່ອເປັນສິນຄ້າສົ່ງອອກຕ່າງປະເທດ.

ສຳລັບບາງລາຍການຜະລິດຕະພັນໄມ້ດັ່ງທີ່ໄດ້ລະບຸຢູ່ໃນຕາຕະລາງທີ 2 ທີ່ໄດ້ກຳນົດເປັນເຄິ່ງສຳເລັດຮູບທີ່ມີມູນຄ່າເພີ່ມປານກາງ ເຊັ່ນ: ໄມ້ເຄື່ອງເຮືອນຄົບຊຸດ ຫຼື ຜະລິດຕະພັນໄມ້ຕາມທີ່ໄດ້ລະບຸໃນມາດຕາ 4 (ຂໍ້ 4.1) ຖ້າຫາກຜູ້ປະກອບກິດຈະການມີສັນຍາຊື້-ຂາຍກັບລູກຄ້າທີ່ແນ່ນອນແລ້ວ ແລະ ມີຈຸດປະສົງຂໍສົ່ງອອກ ຕ້ອງສະເໜີຜ່ານພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເພື່ອນຳສະເໜີມາຍັງກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາ ຕາມແຕ່ລະກໍລະນີ.

## ໝວດທີ III
## ການກວດກາ, ການຢັ້ງຢືນ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 8:** ການກວດກາຜະລິດຕະພັນໄມ້

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີໜ້າທີ່ກວດກາຜະລິດຕະພັນໄມ້ໃນໂຮງງານອຸດສາຫະກຳປຸງແຕ່ງໄມ້ຕາມແຜນການເຄື່ອນໄຫວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ຫຼື ຕາມຄຳສັ່ງ ຫຼືຕາມການສະເໜີຂອງໂຮງງານກໍ່ຄືພາກສ່ວນອື່ນໆທີ່ກ່ຽວຂ້ອງ ໂດຍນຳໃຊ້ແບບຟອມບົດກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ (ອ5).

**ມາດຕາ 9:** ການຢັ້ງຢືນ

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີໜ້າທີ່ ຢັ້ງຢືນຜະລິດຕະພັນໄມ້ ທີ່ໄດ້ຜ່ານການກວດກາຕາມຮູບແບບ ແລະ ຂະໜາດທີ່ໄດ້ ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ໂດຍນຳໃຊ້ແບບຟອມ ບົດກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ (ອ5).

ໃນການກວດກາຕົວຈິງກ່ອນການຢັ້ງຢືນ, ຖ້າຫາກການສະເໜີເປັນຜະລິດຕະພັນສຳເລັດຮູບ ແຕ່ການກວດກາຕົວຈິງເຫັນວ່າຍັງບໍ່ທັນເປັນໄປຕາມທີ່ໄດ້ກຳນົດ ຕ້ອງບັນທຶກໃສ່ໃນແບບຟອມກວດກາຕາມຕົວຈິງ.

**ມາດຕາ 10: ມາດຕະການຕໍ່ຜູ້ລະເມີດ**

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຫາກລະເມີດ ຫຼື ບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຫຼື ມີການປອມແປງບົດກວດກາ ແລະ ຢັ້ງຢືນຜະລິດຕະພັນໄມ້ຈະຖືກກ່າວເຕືອນ, ສຶກສາອົບຮົມ, ໃຊ້ແທນຄ່າເສຍຫາຍ, ປັບໃໝ ແລະ ປະຕິບັດມາດຕະການທາງອາຍາຕາມມາດຕາ 24, 25, 26 ແລະ ມາດຕາ 27 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງສະບັບເລກທີ 1301/ອຄ, ລົງວັນທີ 30/7/2007 ແລະ ມາດຕາ 54, 55, 56 ແລະ ມາດຕາ 57 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງສະບັບເລກທີ 01/99/ສພຊ ,ລົງວັນທີ 3/4/1999.

ສຳລັບພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ມີສ່ວນຮ່ວມໃນການຄຸ້ມຄອງ ແລະ ກວດກາຜະລິດຕະພັນໄມ້ຕາມຂໍ້ຕົກລົງສະບັບນີ້, ຫາກມີການປະພຶດທີ່ຂັດກັບຂໍ້ຫ້າມຂອງລັດຖະກອນໃນໝວດທີ 6 ຕ້ອງປະຕິບັດມາດຕະການທາງວິໄນຕາມໝວດທີ່ 14 ຂອງດຳລັດເລກທີ 82/ນຍ, ລົງວັນທີ 10/05/2003 ວ່າດ້ວຍລະບຽບລັດຖະກອນ ແຫ່ງ ສປປລາວ ຢ່າງເຂັ້ມງວດ.

## ໝວດທີ IV

## ບົດບັນຍັດສຸດທ້າຍ

**ມາດຕາ 11: ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ, ກົມການນຳເຂົ້າ ແລະ ສົ່ງອອກ, ກົມການຄ້າພາຍໃນ, ພະແນກອຸດສາກະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 1048/ອຄ.ກອກ, ລົງວັນທີ 26/6/2008.

ບັນດາຂໍ້ກຳນົດ ທີ່ປະກາດໃຊ້ໄປກ່ອນໜ້ານີ້ຫາກຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ